ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ຍົກລະດັບຄວາມຮູ້ກ່ຽວກັບການນຳໃຊ້ເຄື່ອງຈັກຄັດໄຈ້ທະນະບັດໃຫ້ແກ່ພະນັກງານ




ໃນຕອນເຊົ້າຂອງວັນທີ 21 ກຸມພາ 2020 ທີ່ຜ່ານມາ, ກົມເງິນຕາ ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມກັບ ບໍລິສັດ ເອັນພີ ເອກິບເມັນ ຜູ້ສະໜອງເຄື່ອງຈັກຄັດໄຈ້ທະນະບັດຍີ່ຫໍ້ Glory ຢູ່ ສປປ ລາວ ໄດ້ເປີດຊຸດຝຶກອົບຮົມໃນຫົວຂໍ້: "ການນຳໃຊ້, ການບຳລຸງຮັກສາ ແລະ ແກ້ໄຂບັນຫາພື້ນຖານ ເຄື່ອງຈັກຄັດໄຈ້ທະນະບັດຍີ່ຫໍ້ Glory ລຸ້ນ UW-600 (ສຳລັບເງິນກີບ) ແລະ ລຸ້ນ USF-100 (ສຳລັບເງິນບາດ ແລະ ໂດລາ)" ຂຶ້ນ ໂດຍການເປັນປະທານຂອງທ່ານ ບຸນທະວີ ສຸກດາວົງ ວ່າການຫົວໜ້າກົມເງິນຕາ ທຫລ ພ້ອມດ້ວຍການເຂົ້າຮ່ວມຂອງນັກຝຶກອົບຮົມທີ່ມາຈາກກົມເງິນຕາ, ກົມບໍລິການ ແລະ ສາຂາ ທຫລ ປະຈຳພາກ.

ການເປີດຊຸດຝຶກອົບຮົມໃນຄັ້ງນີ້ເປັນການປະຕິບັດຕາມສັນຍາການບໍລິການບຳລຸງຮັກສາ ແລະ ສ້ອມແປງເຄື່ອງຈັກດັ່ງກ່າວ, ເພື່ອເປັນການຍົກລະດັບຄວາມຮູ້ໃຫ້ແກ່ພະນັກງານຂອງ ທຫລ ທີ່ປະຕິບັດໜ້າທີ່ຕິດພັນກັບເຄື່ອງຈັກດັ່ງກ່າວໃຫ້ມີຄວາມຊຳນານສູງຂຶ້ນ, ໃຫ້ມີ

ຄວາມສາມາດແກ້ໄຂບັນສະເພາະໜ້າເບື້ອງຕົ້ນ ແລະ ນຳໃຊ້ເຄື່ອງຈັກໃຫ້ເກີດປະສິດທິພາບສູງສຸດ, ເຮັດໃຫ້ສາມາດສະກັດກັ້ນ ແລະ ປ້ອງກັນບໍ່ໃຫ້ເງິນປອມເຂົ້າສູ່ລະບົບທະນາຄານ.

ໃນໂອກາດນີ້, ທ່ານວ່າການຫົວໜ້າກົມເງິນຕາ ທຫລ ຍັງໄດ້ເນັ້ນໜັກໃຫ້ບັນດານັກຝຶກອົບຮົມຕ້ອງເອົາໃຈໃສ່ໃນການຮໍ່າຮຽນເອົາຄວາມຮູ້ ແລະ ກຳໃຫ້ໄດ້ບົດຮຽນທັງພາກທິດສະດີ ແລະ ພາກປະຕິບັດຕົວຈິງ ພ້ອມທັງມອບໃຫ້ນັກຝຶກອົບຮົມແຕ່ລະທ່ານສ້າງບົດລາຍງານກ່ຽວກັບຄວາມຮູ້ທີ່ຕົນເອງໄດ້ຮັບ ແລະ ບັນຫາຕ່າງໆຈາກການນຳໃຊ້ເຄື່ອງຈັກຕົວຈິງ ໃນການຝຶກອົບຮົມໃນຄັ້ງນີ້ ເພື່ອເປັນບ່ອນອີງໃຫ້ແກ່ການລາຍງານຕໍ່ຂັ້ນເທິງກ່ຽວກັບສະພາບການນຳໃຊ້ເຄື່ອງຈັກດັ່ງກ່າວ ເພື່ອແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດເກີດຜົນປະໂຫຍດສູງສຸດ.

ການຝຶກອົບຮົມໄດ້ສິ້ນສຸດລົງ ແລະ ໄດ້ມີພິທີມອບໃບຢັ້ງຢືນການເຂົ້າຝຶກອົບຮົມຂຶ້ນໃນຕອນບ່າຍຂອງວັນດຽວກັນ.

**# ຂ່າວ-ພາບ: ວັນປະເສີດ ສິມບູນຂັນ.**